**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ຮັບ ເລກທີ...245...
ວັນທີ...03 MAR 2015...
ໂທລະສັບ 021 217770

ເລກທີ: 09 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 02 MAR 2015

**ລາຍງານການເຄື່ອນໄຫວປະຈຳອາທິດ**
**ທີ 16/02/2015 ຫາ 20/02/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**
**ຂອງທະນາຄານແຫ່ງ ສປປ ລາວ**

## I. <u>ວຽກງານການເມືອງແນວຄິດ</u>

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. <u>ວຽກງານວິຊາສະເພາະ</u>

### 1. <u>ສະພາບເສດຖະກິດເງິນຕາສາກົນ</u>

#### 1.1 <u>ອັດຕາແລກປ່ຽນສາກົນ</u>

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກຂາຍຍ່ອຍຫຼຸດລົງເປັນ -0,8% ໃນເດືອນ 12/2014 ຊຶ່ງຕ່ຳກວ່ານັກວິເຄາະຄາດໄວ້ -0,4% ແລະ ຈຳນວນຜູ້ຂໍສະຫວັດດີການວ່າງງານ ປະຈຳອາທິດທີ 7/02/2015 ເພີ່ມຂຶ້ນ ຈາກ 279.000 ຄົນ ເປັນ 304.000 ຄົນ. ສ່ວນເງິນຢວນ, ໂດລາສິງກະໂປ ແລະ ຣູເປັຍ ອ່ອນຄ່າລົງເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນນັກລົງທຶນຫຼຸດຜ່ອນການລົງທຶນໃນຕະຫຼາດຮຸ້ນອາຊີ ບວກກັບຕະຫຼາດຮຸ້ນຫຼາຍແຫ່ງໃນຂົງເຂດດັ່ງກ່າວໄດ້ປິດ ເນື່ອງຈາກເທດສະການບຸນປີໃໝ່ຂອງຊາວຈີນ ແລະ ຫວຽດນາມ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 10/02/2015 | ອາທິດນີ້ 17/02/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1.1325 | 1.1357 | 0,11% |
| ໂດລາ/ເຢນ | 118.59 | 118.53 | -0,78% |
| ໂດລາ/ບາດ | 32.60 | 32.56 | -0,08% |
| ໂດລາ/ເປໂຊ | 44.34 | 44.24 | -0,40% |
| ໂດລາ/ຣູເປັຍ | 12649.44 | 12758.78 | 0,26% |
| ໂດລາ/ໂດລາສິງກະໂປ | 1.3533 | 1.3555 | -0,01% |
| ໂດລາ/ຢວນ | 6.2433 | 6.2540 | -0,26% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 1,81% ຈາກ 52,20 ໂດລາ/ບາເຣວ ມາເປັນ 53,14 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກເພີ່ມຂຶ້ນ ເປັນຕົ້ນແມ່ນຂົງເຂດອາຊີ ເຫັນໄດ້ຈາກຄັງສຳຮອງນ້ຳມັນທາງການຄ້າຂອງສິງກະໂປ ປະຈຳວັນທີ 11/02/ 2015 ຫຼຸດລົງ 1,38 ລ້ານບາເຣວ ບວກກັບນັກລົງທຶນມີຄວາມເປັນຫ່ວງຕໍ່ການສະໜອງນ້ຳມັນຈາກຂົງເຂດອາຟຣິກາເໜືອເຊັ່ນ: ລີບີ ແລະ ໄນຈີເລຍ ເນື່ອງຈາກເກີດຄວາມບໍ່ສະຫງົບໃນຂົງເຂດດັ່ງກ່າວ;

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,24% ຈາກ 1.241,95 ໂດລາ/ອອນ ມາເປັນ 1.226,50 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,16% ສຳລັບອັດຕາ ທຫກ ແຕ່ແຂງຄ່າຂຶ້ນ 0,05% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,06% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,11% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,42% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 0,11% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,18% ສຳລັບອັດຕາ ທຫກ ແຕ່ແຂງຄ່າຂຶ້ນ 0,30% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 10/02/2015 | | | ອາທິດນີ້ 17/02/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8,086.18 | 8,119.95 | 8,098.93 | 8,089.00 | 8,119.89 | 8,112.21 | -0.03% | 0.00% | -0.16% |
| ບາດ | 250.05 | 251.24 | 250.58 | 250.31 | 251.24 | 250.73 | -0.11% | 0.00% | -0.06% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8,102.85 | 8,144.67 | 8,123.76 | 8,100.48 | 8,139.67 | 8,120.08 | 0.03% | 0.06% | 0.05% |
| ບາດ | 249.67 | 251.50 | 250.58 | 250.08 | 251.63 | 250.85 | -0.16% | -0.05% | -0.11% |
| ຜົດຕ່າງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0.03% | 0.06% | 0.05% | 0.03% | 0.06% | 0.05% | | | |
| ບາດ | -0.16% | -0.05% | -0.11% | -0.16% | -0.05% | -0.11% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,01% ທຽບໃສ່ວັນທີ 13/02/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 52,51%.
- ປະລິມານເງິນ $M_2$ ຫຼຸດລົງ 1,23% ເມື່ອທຽບໃສ່ວັນທີ 13/02/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 25,14%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 16/02/2015) ເຫັນວ່າ ທຫກ ຊື້ໂດລາສຸດທິ 26,73 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 66,55 ລ້ານໂດລາ ແລະ ຂາຍໂດລາໄດ້ 39,82 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 640,13 ລ້ານບາດ (ໃນນີ້ ຊື້ບາດໄດ້ 614,41 ລ້ານບາດ ແລະ ຂາຍ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ບາດໄດ້ 1.254,53 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 8,84% ແລະ ເພີ່ມຂຶ້ນ 26,26% ສຳລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 13,61 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 255,33 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 12,95 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 79,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 28,42 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 933,22 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 10/02/2015 | | ອາທິດທີ 16/02/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 21.50 | 261.41 | 18.97 | 329.76 | -11.76% | 26.15% |
| - ທ/ຄທຸລະກິດອື່ນໆ | 23.36 | 304.61 | 47.58 | 284.64 | 103.68% | -6.56% |
| ລວມຊື້: | 44.86 | 566.02 | 66.55 | 614.41 | 48.35% | 8.55% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 32.38 | 316.80 | 15.80 | 225.39 | -51.21% | -28.85% |
| - ທ/ຄທຸລະກິດອື່ນໆ | 20.49 | 597.45 | 24.02 | 1,029.14 | 17.25% | 72.25% |
| ລວມຂາຍ: | 52.87 | 914.25 | 39.82 | 1,254.53 | -24.68% | 37.22% |
| ຊື້-ຂາຍສຸດທິ ທທກ | -8.01 | -348.23 | 26.73 | -640.13 | -433.66% | 83.82% |
| ຜິດດ່ຽງ ຊື້-ຂາຍ | -17.86 | -61.52 | 40.16 | -104.19 | 580.31% | -426.32% |
| ມູນຄ່າການຊື້-ຂາຍ | 97.72 | 1,480.27 | 106.36 | 1,868.94 | 8.84% | 26.26% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0.00 | 10.00 | 0.00 | 75.00 | | |
| - ທຫລ ຂາຍໃຫ້ ທທກ | 11.45 | 0.00 | 12.95 | 154.00 | | |
| ຊື້-ຂາຍສຸດທິ ທຫລ | -11.45 | 10.00 | -12.95 | -79.00 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 11.38 | 241.83 | 13.61 | 255.33 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0.08 | 202.01 | 0.12 | 933.32 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 6.19 | 0.00 | 28.54 | 0.00 | | |
| ຊື້-ຂາຍສຸດທິ ທຫລ | -6.12 | 202.01 | -28.42 | 933.32 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 02/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 2,00% ຫຼຸດລົງ 0,04% ຈາກ 2,04% ໃນເດືອນ 01/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 54,16 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 14,4% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 867 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 18,77% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 594,72 ຕື້ກີບ ເພີ່ມຂຶ້ນ 61,03% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (13-19/02/2015) ມີຈຳນວນ 1.169 ຄັ້ງ ໂດຍມີມູນຄ່າ 381,09 ຕື້ກີບ ເພີ່ມຂຶ້ນ 32,34% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 367 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.402,22ຈຸດ ເພີ່ມຂຶ້ນ 0,70% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 346.852 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,33 ຕື້ກີບ ເພີ່ມຂຶ້ນ 169,98% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 84,76% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.900 ກີບ/ຮຸ້ນ ເພີ່ມຂຶ້ນ 81 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 112.687 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 777,54 ລ້ານກີບ ເພີ່ມຂຶ້ນ 145,73% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 93,50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,48%[2].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.064 ກີບ/ຮຸ້ນ ເພີ່ມຂຶ້ນ 118 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 204.282 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,44 ຕື້ກີບ ເພີ່ມຂຶ້ນ 435,19% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 89,86% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,27%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດຢູ່ທີ່ 10.000 ກີບ ບໍ່ປ່ຽນແປງເມື່ອທຽບໃສ່ອາທິດທີ່ຜ່ານມາ ຊຶ່ງໃນອາທິດນີ້ ແມ່ນບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL)ມີລາຄາຊື້-ຂາຍສະເລ່ຍ 3.911 ກີບ/ຮຸ້ນ ຫຼຸດລົງ 84 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 29.883 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 116,87 ລ້ານກີບ ຫຼຸດລົງ 58% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 37,07% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%[5].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການປະຊຸມຮ່ວມກັບ ກົມພາສີກະຊວງການເງິນ ກ່ຽວກັບການປັບປຸງເນື້ອໃນຂອງຮ່າງບົດບັນທຶກຄວາມເຂົ້າໃຈ ເພື່ອແລກປ່ຽນຂໍ້ມູນລະຫວ່າງ ໜ່ວຍງານຕ້ານການຟອກເງິນ ແລະ ກົມພາສີ ທີ່ໜ່ວຍງານຕ້ານການຟອກເງິນ;
- ສຳເລັດການຈັດກອງປະຊຸມ: ❶ ກອງປະຊຸມລາຍງານກ່ຽວກັບ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ໃຫ້ແກ່ບັນດາສະຖານທູດຕ່າງປະເທດ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ທີ່ໂຮງແຮມລາວພາຊາ, ❷ ກອງປະຊຸມປຶກສາຫາລືການແບ່ງຄວາມຮັບຜິດຊອບໃນການ

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ຄົ້ນຄ້ວາຮ່າງນິຕິກຳກ່ຽວກັບ ວຽກງານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນທະນາຄານແຫ່ງ ສປປ ລາວ ທີ່ ທຫລ, ❸ ກອງປະຊຸມສະຫຼຸບວຽກງານ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ປະຈຳປີ 2014;

- ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ່ III ຂອງຄະນະພັກຮາກຖານທະນາຄານ ພັດທະນາລາວ ທີ່ທະນາຄານພັດທະນາລາວ;
- ສຳເລັດການເພີ່ມເລກໝາຍບັນຊີ ທະນາຄານທຸລະກິດ ເຂົ້າລະບົບ MIS.

III. <u>**ແຜນວຽກຈຸດສຸມອາທິດຕໍ່ໄປ:**</u>

- ກະກຽມເອກະສານເຂົ້າຜ່ານກອງປະຊຸມສະພາບໍລິຫານສະໄໝສາມັນຄັ້ງທີ I ປະຈຳປີ 2015;
- ສືບຕໍ່ກະກຽມເນື້ອໃນກອງປະຊຸມໃຫຍ່ຄັ້ງທີ III ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ກະກຽມຈັດກອງປະຊຸມປະກອບຄຳເຫັນ ຕໍ່ຮ່າງແຜນຍຸດທະສາດ ທະນາຄານບ້ານ ຮ່ວມກັບໂຄງການ GIZ-AFP;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າການເພີ່ມສະຖາບັນການເງິນຈຸລະພາກ ເຂົ້າໃນບົດບັນທຶກຄວາມເຂົ້າໃຈ ແລະ ຈະມີການປະຊຸມປຶກສາຫາລື ລະຫວ່າງ ກົມຄຸ້ມຄອງສະຖາບັນການເງິນ ແລະ CARD ກ່ຽວກັບ MOU, ❷ ຄົ້ນຄວ້າການສະເໜີຂອງ IMF ສະເໜີແຕ່ງຕັ້ງພະນັກງານ ທຫລ ເຂົ້າຮ່ວມໂຄງການສະໜອງຂໍ້ມູນດ້ານນິຕິກຳຂອງທະນາຄານກາງ, ❸ ຄົ້ນຄວ້າຄູ່ມືການປະຕິບັດໃຫ້ແທດເໝາະກັບສະພາບການເງິນຈຸລະພາກໃນ ສປປ ລາວ, ❹ ຄົ້ນຄວ້າເນື້ອໃນຂອງຫຼັກການບາແຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການບາແຊວ 2.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ,

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ